# ບົດຂ່າວ

UNDP

Empowered lives.
Resilient nations.

## **<u>ແຂວງສະຫວັນນະເຂດ ເປີດຮູບປັ້ນໂອ່ງ-ມັ່ງທີ່ໃກ້ຈະສູນພັນ ຢູ່ນະຄອນ ໄກສອນ ພົມວິຫານ</u>**

**ນະຄອນໄກສອນ ພົມວິຫານ, 13 ທັນວາ 2018**– ໃນພິທີເປີດຮູບປັ້ນໂອ່ງ-ມັ່ງທີ່ໄດ້ຈັດຂຶ້ນ ທີ່ນະຄອນໄກສອນ ຂອງແຂວງສະຫວັນນະເຂດ, ໂຄງການຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງ ຢູ່ໃນລະບົບນິເວດປ່າໂຄກພາກໃຕ້ ຂອງ ສປປ ລາວ ເຊິ່ງເປັນໂຄງການຮ່ວມມືລະຫວ່າງກົມປ່າໄມ້ ຝ່າຍລັດຖະບານແຫ່ງ ສປປ ລາວ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ມອບຮູບປັ້ນໂອ່ງ-ມັ່ງ ໃຫ້ແກ່ເທດສະບານແຂວງ. ຮູບປັ້ນດັ່ງກ່າວໄດ້ຖືກຕັ້ງຢູ່ວົງວຽນ ຈຸດທີ່ເປັນສູນກາງຂອງນະຄອນ ເພື່ອປູກຈິດສຳນຶກກ່ຽວກັບການປົກປັກຮັກສາສັດທີ່ໃກ້ຈະສູນພັນ.

ໂອ່ງ-ມັ່ງ ເປັນສັດທີ່ໃກ້ຈະສູນພັນ ທີ່ຖືກພົບຢູ່ໃນປະເທດລາວ ແລະ ກຳປູເຈຍ ເຊິ່ງຄົນທ້ອງຖິ່ນຮູ້ຈັກດີ. ໃນ ສປປ ລາວ, ພວກເຂົາອາໄສຢູ່ປ່າໂຄກຂອງແຂວງສະຫວັນນະເຂດ. ປ່າໄມ້ດັ່ງກ່າວໄດ້ຮັບຜົນກະທົບຈາກການຕັດໄມ້ທີ່ຫຼາຍເກີນໃນຫຼາຍທົດສະວັດທີ່ຜ່ານມາ. ການຕັດໄມ້ ເຊັ່ນດຽວກັນກັບການລ່າສັດປ່າທີ່ຜິດກົດໝາຍ ໄດ້ເພີ່ມຄວາມກົດດັນຕໍ່ຊີວະນາໆພັນທີ່ອຸດົມສົມບູນ ແລະ ປະຊາກອນໂອ່ງ-ມັ່ງ. ນອກຈາກໂອ່ງ-ມັ່ງແລ້ວ, ກໍຍັງມີສັດທີ່ໃກ້ຈະສູນພັນອື່ນໆ ເຊັ່ນ ຕະຫລຸງ ແລະ ຊ້າງອາຊີ.

ກະຊວງກະສິກຳ ແລະ ປ່າໄມ້ ໂດຍໄດ້ຮັບທຶນຈາກກອງທຶນສິ່ງແວດລ້ອມໂລກ ແລະ ຮ່ວມມືກັບອົງການສະຫະປະຊາຊາດ ເພື່ອການພັດທະນາ ກຳລັງຈັດຕັ້ງປະຕິບັດ*ໂຄງການຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງ ຢູ່ໃນລະບົບນິເວດປ່າໂຄກພາກໃຕ້ ຂອງ ສປປ ລາວ* ເພື່ອປົກປັກຮັກສາປ່າໄມ້ ແລະ ອະນຸລັກຊີວະນາໆພັນ ແລະ ສັດປ່າ. ໜຶ່ງໃນກິດຈະກຳຫຼັກຂອງໂຄງການ ເຊິ່ງໄດ້ເຮັດສຳເລັດກ່ອນໜ້ານີ້ໃນປີນີ້ທ່ອງທ່ຽວລາວ 2018 ນີ້ ແມ່ນການເປີດສູນອະນຸລັກລະບົບນິເວດປ່າໂຄກ, ໂອ່ງ-ມັ່ງ ແລະ ທີ່ພັກສຳລັບນັກທ່ອງທ່ຽວ. ຢູ່ສູນນີ້, ຊາວບ້ານໃນທ້ອງຖິ່ນ ໄດ້ເຮັດວຽກຮ່ວມອຳນາດການປົກຄອງຂັ້ນແຂວງ ແລະ ເມືອງ ເພື່ອຮັບປະກັນວ່າ ລະບົບນິເວດປ່າໂຄກ ໄດ້ຮັບການປົກປັກຮັກສາດ້ວຍຄວາມເອົາໃຈໃສ່ເປັນຢ່າງດີ.

“ໂຄງການຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງ ຢູ່ໃນລະບົບນິເວດປ່າໂຄກພາກໃຕ້ ຂອງ ສປປ ລາວ, ໂອ່ງ-ມັ່ງ ໄດ້ກາຍເປັນສັນຍາລັກຂອງການອະນຸລັກປ່າໂຄກ ໃນແຂວງສະຫວັນນະເຂດ. ພວກເຮົາຫວັງວ່າ ຮູບປັ້ນເຫຼົ່ານີ້ ຈະສືບຕໍ່ເປັນການປູກຈິດສຳນຶກກ່ຽວກັບການອະນຸລັກໂອ່ງ-ມັ່ງທີ່ໃກ້ຈະສູນພັນທີ່ມີຄວາມສຳຄັນ ເຊັ່ນດຽວກັບປ່າໂຄກ ໃຫ້ແກ່ປະຊາຊົນແຂວງສະຫວັນນະເຂດ ແລະ ສປປ ລາວ ໃນຫຼາຍໆປີຕໍ່ໜ້າ,” ທ່ານ ບາລາຊູບຣາມານຽມ ມູຣາລີ, ຮອງຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ, ໄດ້ກ່າວມີຄຳເຫັນໃນພິທີມອບຮັບ.

ໃນພິທີ, ທ່ານ ທອນແກ້ວ ພຸດທະໄກຍະລາດ, ຮອງເຈົ້າແຂວງ ແຂວງສະຫວັນນະເຂດ, ໄດ້ກ່າວວ່າ: “ໂອ່ງ-ມັ່ງ ບໍ່ເປັນພຽງແຕ່ສັດທີ່ໃກ້ຈະສູນພັນເທົ່ານັ້ນ, ແຕ່ຍັງເປັນສັດນຳໂຊກ ສັດຄໍ້າຄູນສຳລັບຄົນລາວ. ໂດຍຜ່ານໂຄງການທີ່ສຳຄັນນີ້, ພວກເຮົາຢາກໃຫ້ຈຳນວນສັດເຫຼົ່ານີ້ເພີ່ມຂຶ້ນ ຂະຫຍາຍພັນແຜ່ລາມໄປສູ່ຂົງເຂດອື່ນ.”

ປະຊາຊົນໃນທ້ອງຖິ່ນ ທີ່ໄດ້ມາເຫັນພິທີເປີດຮູບປັ້ນ ຕ່າງກໍມີຄວາມດີໃຈ ທີ່ໄດ້ເຫັນສິ່ງໃໝ່ຫຼ້າສຸດນີ້ເພີ່ມຂຶ້ນໃນນະຄອນຂອງພວກເຂົາ. "ໂອ່ງ-ມັ່ງ ມີແຕ່ອາໄສຢູ່ລາວ ແລະ ກຳປູເຈຍ ເທົ່ານັ້ນ ແລະ ພວກເຮົາຕ້ອງໄດ້ປົກປັກຮັກສາປ່າຂອງພວກເຮົາໄວ້ ເພື່ອອະນຸລັກໂອ່ງ-ມັ່ງ ໃຫ້ຮອດເຊັ່ນລູກເຊັ່ນຫຼານ," ທ່ານ ນ. ວາດສະໜາ ເອກະລາດ, ໜຶ່ງໃນຜູ້ໄດ້ພົບເຫັນ.

ແຂກທີ່ມາຮ່ວມພິທີອີກທ່ານໜຶ່ງ, ທ່ານ ນ. ມາລີລາມອນ ທັນທະເທບ ຕ້ອງການໃຫ້ຄົນລາວ ຈົດຈຳ ຄວາມສຳຄັນຂອງການຢູ່ຮ່ວມກັບທຳມະຊາດ: "ຂ້າພະເຈົ້າເຊື່ອວ່າ ການປົກປັກຮັກສາປ່າໄມ້ຂອງພວກເຮົາ ເປັນສິ່ງທີ່ມີຄວາມສຳຄັນຫຼາຍແທ້ໆ ເພາະວ່າພວກເຮົາອາໄສປ່າໄມ້ເພື່ອການຢູ່ລອດຂອງພວກເຮົາ ນັບແຕ່ອາກາດທີ່*ພວກເຮົາ*ຫາຍໃຈໄປເຖິງອາຫານທີ່*ພວກເຮົາ*ກິນ. ປ່າໄມ້ປຽບເໝືອນທີ່ຢູ່ອາໄສຂອງຄົນລາວ. ການປົກປັກຮັກສາປ່າໄມ້ ກໍຄືການປົກປັກຮັກສາພວກເຮົາ."

ແນວຄວາມຄິດນີ້ສອດຄ່ອງກັບຄວາມພະຍາຍາມຂອງລັດຖະບານ ໃນການເພີ່ມເນື້ອທີ່ປ່າໄມ້ຂອງ ສປປ ລາວ ໃຫ້ໄດ້ 70% ພາຍໃນປີ 2020, ເຊິ່ງໂຄງການຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງ ຢູ່ໃນລະບົບນິເວດປ່າໂຄກພາກໃຕ້ຂອງ ສປປ ລາວ ກໍໄດ້ປະກອບສ່ວນຕໍ່ກັບຄວາມພະຍາຍາມນີ້. ການອະນຸລັກປ່າໂຄກ ບໍ່ພຽງແຕ່ມີຄວາມສຳຄັນສຳລັບການອະນຸລັກສັດປ່າທີ່ອາໄສຢູ່ປ່າໂຄກເທົ່ານັ້ນ, ແຕ່ຍັງເປັນການຕໍ່ສູ້ກັບການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ສ້າງຄວາມເຂັ້ມແຂງໃນການກຽມພ້ອມຮັບມືກັບໄພພິບັດທີ່ກ່ຽວຂ້ອງກັບການປ່ຽນແປງຂອງສະພາບດິນຟ້າອາກາດ ເຊັ່ນ ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ.

**ສຳລັບຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:**

*ທ່ານ ນາງ ອິດິໂກ ຮາໂມສ-ໂຊໂລ, ຜູ້ຊ່ວຍອຊານດ້ານການສື່ສານ, ອົງການສະຫະປະຊາຊາດ ປະຈຳ ສປປ ລາວ, ໂທ +856 021 267 778, ມືຖື: +856 020 7717 7913 ອີເມວ: [ildikohamos@oneun.org](mailto:ildikohamos@oneun.org)*
*ທ່ານ ສົມລິດ ຄູນປະເສີດ, ຜູ້ຊ່ວຍດ້ານການສື່ສານ, ອົງການສະຫະປະຊາຊາດ ເພື່ອການພັດທະນາ, ໂທ: 020 777 118 74, ອີເມວ: [somlith.khounpaseuth@undp.org](mailto:somlith.khounpaseuth@undp.org)*